ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 1525 /ສທ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2025

# ຂໍ້ຕົກລົງ
# ວ່າດ້ວຍສະຫຼາກ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ

- ອີງຕາມ ກົດໝາຍວ່າດ້ວຍອາຫານ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ດໍາລັດ ວ່າດ້ວຍ ຜະລິດຕະພັນອາຫານ ແລະ ອຸປະກອນການໃຫ້ອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ສະບັບເລກທີ 472/ລບ, ລົງວັນທີ 30 ທັນວາ 2019 ແລະ ຄໍາແນະນໍາການຈັດຕັ້ງປະຕິບັດດໍາລັດ ສະບັບເລກທີ 1540/ສທ, ລົງວັນທີ 25 ທັນວາ 2020;
- ອີງຕາມ ໜັງສືສະເໜີຂອງກົມອາຫານ ແລະ ຢາ ສະບັບເລກທີ 2148/ກອຢ, ລົງວັນທີ 27 ພຶດສະພາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງສະຫຼາກ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ ທີ່ຜະລິດ, ນໍາເຂົ້າ ແລະ ຈໍາໜ່າຍ ໃນ ສປປ ລາວ, ເພື່ອຮັບປະກັນໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ມີຄວາມປອດໄພ ແນໃສ່ປົກປ້ອງ, ສົ່ງເສີມ ແລະ ສະໜັບສະໜູນການລ້ຽງລູກດ້ວຍນໍ້ານົມແມ່, ເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍ ມີໂພຊະນາການທີ່ດີ, ມີການຈະເລີນເຕີບໂຕທາງດ້ານຮ່າງກາຍ ແລະ ພັດທະນາທາງດ້ານມັນສະໝອງ ກາຍເປັນຊັບພະຍາກອນມະນຸດທີ່ມີຄຸນນະພາບ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ສະຫຼາກ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສໍາລັບເດັກອ່ອນ ແລະ ເດັກນ້ອຍ

ສະຫຼາກ ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ແມ່ນ ເຄື່ອງໝາຍການຄ້າ, ຮູບພາບ ຫຼື ຂໍ້ຄວາມທີ່ຕິດຢູ່ພາຊະນະຫຸ້ມຫໍ່ບັນຈຸອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ເພື່ອຈຸດປະສົງໃຫ້ຂໍ້ມູນ ກ່ຽວກັບ ຜູ້ຜະລິດ, ຜູ້ນຳເຂົ້າ, ຜູ້ຈຳໜ່າຍ, ການນຳໃຊ້ ແລະ ການເກັບຮັກສາ. ສະຫຼາກ ເປັນອົງປະກອບທີ່ມີບົດບາດສຳຄັນ ຊຶ່ງບັງຄັບໃຫ້ລະບຸຂໍ້ມູນລາຍລະອຽດທີ່ຈຳເປັນ ດ້ານຄວາມປອດໄພ, ດ້ານໂພຊະນາການ ທີ່ເໝາະສົມກັບອາຍຸຂອງເດັກອ່ອນ ແລະ ເດັກນ້ອຍ ແນໃສ່ເພື່ອແນະນຳຜູ້ປະກອບການ, ຜູ້ຊົມໃຊ້ ລວມທັງພໍ່ແມ່, ຜູ້ປົກຄອງ ແລະ ຜູ້ດູແລເດັກ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ເດັກອ່ອນ** ໝາຍເຖິງ ເດັກ ແຕ່ມື້ເກີດ ຫາ ອາຍຸ 12 ເດືອນ;
2. **ເດັກນ້ອຍ** ໝາຍເຖິງ ເດັກທີ່ມີອາຍຸ ແຕ່ 12 ເດືອນ ຫາ 36 ເດືອນ;
3. **ຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ປະກອບດ້ວຍ:**

**ກ. ຜະລິດຕະພັນອາຫານທົດແທນນ້ຳນົມແມ່**

1) ຜະລິດຕະພັນສູດນົມ ຫຼື ບໍ່ແມ່ນສູດນົມ ທີ່ເຮັດການໂຄສະນາ ຫຼື ເພື່ອໃຊ້ເປັນອາຫານທົດແທນນ້ຳນົມແມ່ ບາງສ່ວນ ຫຼື ທັງໝົດ, ບໍ່ວ່າຈະເໝາະສົມກັບວັດຖຸປະສົງນັ້ນ ສຳລັບເດັກອ່ອນ ແລະ ເດັກນ້ອຍອາຍຸແຕ່ມື້ເກີດ ຫາ 36 ເດືອນ, ລວມທັງ ບໍ່ຈຳກັດພຽງແຕ່ 3 ຜະລິດຕະພັນ ດັ່ງລຸ່ມນີ້:
   - **ນົມຜົງສູດສຳລັບເດັກອ່ອນ (ສູດ 1)** ໝາຍເຖິງ ນົມ ຫຼື ຜະລິດຕະພັນທີ່ຄ້າຍຄືນົມ ສຳລັບເດັກ ແຕ່ມື້ເກີດ ຫາ ອາຍຸ 6 ເດືອນ;
   - **ນົມຜົງສູດຕໍ່ເນື່ອງ (ສູດ 2)** ໝາຍເຖິງ ນົມ ຫຼື ຜະລິດຕະພັນທີ່ຄ້າຍຄືນົມ ສຳລັບເດັກອາຍຸ 6 ເດືອນ ຂຶ້ນໄປ; ອາຍຸສູງສຸດ ທີ່ບົ່ງບອກໃນສະຫຼາກຜະລິດຕະພັນ ຈະແຕກຕ່າງກັນ ໃນແຕ່ລະປະເທດ ແຕ່ຕາມປົກກະຕິແລ້ວ ຈະຢູ່ໃນລະຫວ່າງ 12 ເດືອນ ຫາ 24 ເດືອນ;
   - **ນົມຜົງສູດສຳລັບເດັກນ້ອຍ (ສູດ 3)** ໝາຍເຖິງ ນົມ ຫຼື ຜະລິດຕະພັນທີ່ຄ້າຍຄືນົມ ທີ່ເຮັດການໂຄສະນາ ຫຼື ເພື່ອໃຊ້ ສຳລັບເດັກອາຍຸ 12 ເດືອນຂຶ້ນໄປ ຫາ 36 ເດືອນ ຫຼື ເອີ້ນວ່າເປັນນົມສູດສຳລັບການຈະເລີນເຕີບໂຕຂອງເດັກ;

2) ຜະລິດຕະພັນນົມອື່ນໆ ທີ່ເຮັດການໂຄສະນາ ຫຼື ເພື່ອໃຊ້ຕາມຄວາມເໝາະສົມ ສຳລັບເດັກອາຍຸຕ່ຳກວ່າ 36 ເດືອນ.

**ຂ. ອາຫານເສີມ** ໝາຍເຖິງອາຫານໃດໜຶ່ງທີ່ເໝາະສົມ ຫຼື ເປັນຕົວແທນທີ່ເໝາະສົມ ເປັນອາຫານຄວບຄູ່ກັບນ້ຳນົມແມ່ ຫຼື ຄວບຄູ່ ຜະລິດຕະພັນອາຫານທົດແທນນົມແມ່ ແຕ່ອາຍຸ 6 ເດືອນ ຫາ ອາຍຸ 36 ເດືອນ;

4. **ອຸປະກອນໃຫ້ອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ** ໝາຍເຖິງ ອຸປະກອນທີ່ນຳໃຊ້ໃນການໃຫ້ອາຫານເດັກອ່ອນ ແລະ ເດັກນ້ອຍ ເປັນຕົ້ນ ເຕົ້ານົມທຸກປະເພດ, ຫົວຈຸກນົມ, ໝາກແວ້;
5. **ກົດລະຫັດອາຫານສາກົນ (Codex Alimentarius)** ໝາຍເຖິງ ບັນດາມາດຕະຖານ, ຄຳແນະນຳ, ກົດລະຫັດ ຂອງພາກປະຕິບັດ ທີ່ຮັບຮອງໂດຍຄະນະກຳມະການກົດລະຫັດອາຫານສາກົນ, ມາດຕະຖານດ້ານອາຫານ ຂອງອົງການອະນາໄມໂລກ ແລະ ອົງການອາຫານ ແລະ ການກະເສດ ທີ່ໄດ້ກຳນົດເພື່ອປົກປ້ອງສຸຂະພາບ ຂອງຜູ້ຊົມໃຊ້ ແລະ ຄວາມເປັນຍຸຕິທຳ ຂອງການຄ້າດ້ານອາຫານ;

6. **ການໃສ່ສະຫຼາກ (Labelling)** ໝາຍເຖິງ ສິ່ງທີ່ເປັນລາຍລັກອັກສອນ, ສິ່ງພິມ ຫຼື ກຼາຟິກ ທີ່ສະແດງຢູ່ໃນສະຫຼາກ ຕິດມາພ້ອມຜະລິດຕະພັນອາຫານ ຊຶ່ງປະກອບດ້ວຍຂໍ້ມູນທີ່ຈຳເປັນ ແລະ ສຳຄັນສຳລັບຜູ້ບໍລິໂພກ.

7. **ການກ່າວອ້າງທາງດ້ານສຸຂະພາບ (Health Claim)** ໝາຍເຖິງການສະແດງໃດໜຶ່ງ ທີ່ລະບຸ, ແນະນຳ ຫຼື ໃຫ້ຄວາມໝາຍ ເຖິງຄວາມສຳພັນລະຫວ່າງອາຫານ ຫຼື ສ່ວນປະກອບຂອງອາຫານນັ້ນ ກັບສຸຂະພາບ. ການກ່າວອ້າງທາງດ້ານສຸຂະພາບປະກອບມີ ແຕ່ບໍ່ຈຳກັດພຽງແຕ່ສິ່ງຕໍ່ໄປນີ້:

ກ. ການກ່າວອ້າງກ່ຽວກັບໜ້າທີ່ຂອງສານອາຫານ ທີ່ອະທິບາຍເຖິງບົດບາດທາງສາລີລະວິທະຍາ ຂອງສານອາຫານໃນການຈະເລີນເຕີບໂຕ, ການພັດທະນາ ແລະ ໜ້າທີ່ປົກກະຕິຂອງຮ່າງກາຍ;

ຂ. ການກ່າວອ້າງໜ້າທີ່ອື່ນໆ ກ່ຽວກັບຜົນປະໂຫຍດສະເພາະ ຂອງການບໍລິໂພກອາຫານ ຫຼື ສ່ວນປະກອບຂອງອາຫານທີ່ກ່ຽວຂ້ອງກັບການປະກອບສ່ວນທີ່ດີຕໍ່ສຸຂະພາບ ຫຼື ການປັບປຸງໜ້າທີ່ ຫຼື ການປັບປ່ຽນ ຫຼື ການປົກປັກຮັກສາສຸຂະພາບ ແລະ;

ຄ. ການຫຼຸດຜ່ອນຄວາມສ່ຽງຕໍ່ພະຍາດ ທີ່ກ່ຽວຂ້ອງກັບການບໍລິໂພກອາຫານ ຫຼື ສ່ວນປະກອບຂອງອາຫານ, ໃນຂອບເຂດຂອງອາຫານທັງໝົດ, ເພື່ອຫຼຸດຜ່ອນຄວາມສ່ຽງຂອງການເປັນພະຍາດ ຫຼື ສະພາບທີ່ກ່ຽວຂ້ອງກັບສຸຂະພາບ. ໃນນີ້ ສຸຂະພາບໝາຍເຖິງ ສະພາບ ຂອງ ຄວາມເປັນຢູ່ທີ່ດີທາງ ຮ່າງກາຍ, ຈິດໃຈ, ສັງຄົມ ແລະ ບໍ່ມີພະຍາດເຈັບເປັນ ຫຼື ຄວາມອ່ອນແອເທົ່ານັ້ນ.

8. **ການກ່າວອ້າງທາງດ້ານໂພຊະນາການ (Nutrition Claim)** ໝາຍເຖິງ ການເປັນຕົວແທນໃດໜຶ່ງທີ່ລະບຸ, ແນະນຳ ຫຼື ໃຫ້ ຄວາມໝາຍຄຸນສົມບັດທາງໂພຊະນາການຂອງອາຫານ ໂດຍສະເພາະແຕ່ບໍ່ຈຳກັດຄ່າພະລັງງານ ແລະ ປະລິມານຂອງທາດ ໂປຼຕີນ, ໄຂມັນ ແລະ ແປ້ງ, ເຊັ່ນດຽວກັນກັບ ປະລິມານຂອງວິຕາມິນ ແລະ ແຮ່ທາດເຊັ່ນ:

ກ. ການກ່າວອ້າງເຖິງສານອາຫານ ໃນລາຍການສ່ວນປະກອບ;

ຂ. ການກ່າວອ້າງເຖິງສານອາຫານ ວ່າເປັນສ່ວນປະກອບທີ່ຈຳເປັນ ຂອງສະຫຼາກໂພຊະນາການ;

ຄ. ການແຈ້ງປະລິມານ ຫຼື ຄຸນນະພາບຂອງບັນດາສານອາຫານ ຫຼື ສ່ວນປະກອບບາງຊະນິດໃນສະຫຼາກ;

9. **ຂໍ້ມູນທາງດ້ານໂພຊະນາການ (Nutrition Information)** ໝາຍເຖິງ ການສະແດງຂໍ້ມູນຕົວຈິງທາງດ້ານໂພຊະນາການສະເພາະຂອງຜະລິດຕະພັນໃສ່ໃນສະຫຼາກ ເປັນຕົ້ນ ຄຸນຄ່າພະລັງງານ, ສ່ວນປະກອບຂອງທາດ ໂປຼຕີນ, ໄຂມັນ ແລະ ແປ້ງ ລວມທັງ ສ່ວນປະກອບຂອງວິຕາມິນ ແລະ ແຮ່ທາດ.

10. **ການຕະຫຼາດດີຈິຕອນ (Digital Marketing)** ໝາຍເຖິງການຕະຫຼາດທີ່ດຳເນີນ ຫຼື ເຜີຍແຜ່ໃນລະບົບປະຕິບັດງານ ຫຼື ເຕັກໂນໂລຊີຂໍ້ມູນຂ່າວສານ, ເຄືອຂ່າຍ, ແອັບພລິເຄຊັນທີ່ໃຊ້ອິນເຕີເນັດ, ອຸປະກອນ ແລະ/ຫຼື ຂໍ້ມູນທີ່ມີຢູ່ໃນລະບົບ ແລະ ເຄືອຂ່າຍ ດັ່ງກ່າວ ແລະ ລະບົບດີຈິຕອນອື່ນໆ ເປັນຕົ້ນ ສື່ສັງຄົມອອນລາຍ, ເວັບໄຊທ໌, ອີເມລ໌, ຂໍ້ຄວາມ ຫຼື ສຽງ ຫຼື ຮູບພາບ ຫຼື ວິດີໂອ, ການຖ່າຍທອດສົດ, ເຄື່ອງມືຄົ້ນຫາ, ການຄ້າອອນລາຍ, ການຄ້າຂາຍລະຫວ່າງບຸກຄົນໂດຍກົງ ຫຼື ກຸ່ມທາງອອນລາຍ ແລະ ແອັບພລິເຄຊັນທາງໂທລະສັບມືຖື ແລະ/ຫຼື ອຳນວຍຄວາມສະດວກໂດຍເຕັກໂນໂລຊີດີຈິຕອນ.

11. **ສ່ວນປະກອບ (Ingredients)** ໝາຍເຖິງ ທຸກໆສານ ລວມທັງທາດເພີ່ມທີ່ໃຊ້ໃນການຜະລິດ ຫຼື ການກະກຽມອາຫານ ແລະ ສານທີ່ມີຢູ່ໃນຜະລິດຕະພັນສຸດທ້າຍ ຊຶ່ງອາດຈະຢູ່ໃນຮູບແບບທີ່ໄດ້ຮັບການດັດແປງ.

12. **ຄ່າອ້າງອີງຂອງສານອາຫານ (Nutrient Reference Values, NRVs)** ໝາຍເຖິງຊຸດຄ່າຄວາມຕ້ອງການ ທີ່ລະບຸໃນສະຫຼາກໂພຊະນາການ ຊຶ່ງຄ່າດັ່ງກ່າວເປັນຂໍ້ມູນອ້າງອີງທາງດ້ານວິທະຍາສາດ ທີ່ໄດ້ຜ່ານການຮັບຮອງ ແລະ ແນະນຳໃຫ້ນຳໃຊ້ສຳລັບການບໍລິໂພກສານອາຫານໃນແຕ່ລະມື້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການ ຄຸ້ມຄອງ, ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ຜະລິດຕະພັນ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ.

## ໝວດທີ 2
## ສະຫຼາກ ແລະ ເນື້ອໃນຂອງສະຫຼາກ
## ຜະລິດຕະພັນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ

**ມາດຕາ 5 ສະຫຼາກຜະລິດຕະພັນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ**

ຜະລິດຕະພັນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ທີ່ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ໃນ ສປປ ລາວ ຕ້ອງໃສ່ສະຫຼາກທີ່ ມີຊື່ ແລະ ເນື້ອໃນ ເປັນພາສາລາວ ໃຫ້ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້. ອົງປະກອບສະຫຼາກຕ້ອງມີດັ່ງລຸ່ມນີ້:

1. ຊື່ຂອງຜະລິດຕະພັນ;
2. ສ່ວນປະສົມ ຫຼື ສ່ວນປະກອບຂອງຜະລິດຕະພັນອາຫານ;
3. ນ້ຳໜັກ ຫຼື ບໍລິມາດໃນການບັນຈຸ;
4. ຊື່ທີ່ຢູ່ຂອງສະຖານທີ່ດຳເນີນທຸລະກິດອາຫານ ແລະ ເງື່ອນໄຂໃນການຕິດຕໍ່ຂອງຜູ້ຜະລິດ ຫຼື ຜູ້ນຳເຂົ້າ;
5. ຊຸດຜະລິດ ແລະ ວັນເດືອນປີຜະລິດ, ວັນເດືອນປີໝົດອາຍຸ;
6. ເລກທີຂຶ້ນທະບຽນ ອຢ ຂອງຜະລິດຕະພັນອາຫານ;
7. ຂໍ້ແນະນຳໃນການນຳໃຊ້, ເກັບຮັກສາ ແລະ ຄຳເຕືອນ.

**ມາດຕາ 6 ເນື້ອໃນສະຫຼາກ**

ຜະລິດຕະພັນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງລະບຸ ເນື້ອໃນສະຫຼາກເປັນພາສາລາວ, ຫຼື ພາສາລາວ ແລະ ພາສາຕ່າງປະເທດ ດັ່ງລຸ່ມນີ້:

**1. ຊື່ຂອງຜະລິດຕະພັນອາຫານ**

- ຊື່ຜະລິດຕະພັນອາຫານ ຕ້ອງເປັນພາສາລາວ ຫຼື ພາສາລາວ ແລະ ພາສາຕ່າງປະເທດ ຄວບຄູ່ກັນ, ພາສາລາວຕ້ອງມີຂະໜາດໃຫຍ່ກວ່າພາສາຕ່າງປະເທດ, ຕ້ອງຂຽນໃຫ້ຊັດເຈນ ເປັນຕົ້ນ "ນົມຜົງ ຫຼື ນ້ຳນົມ ແລະ ອາຫານເສີມ ສຳລັບເດັກອ່ອນ ແລະ ເດັກນ້ອຍ ຫຼື ການກຳນົດທີ່ເໝາະສົມ ຊຶ່ງລະບຸຮູບແບບທີ່ແທ້ຈິງຂອງຜະລິດຕະພັນ";
- ແຫຼ່ງຂອງທາດໂປຼຕີນໃນຜະລິດຕະພັນ ຕ້ອງສະແດງອອກຢ່າງຈະແຈ້ງໃນສະຫຼາກ. ຖ້າແຫຼ່ງທາດໂປຼຕີນໄດ້ມາຈາກສັດ ແລະ ພືດ ເປັນຕົ້ນ ງົວ, ຄວາຍ, ແກະ, ຖົ່ວເຫຼືອງ, ຜະລິດຕະພັນຕ້ອງລະບຸວ່າ "ນົມງົວ, ນົມຄວາຍ, ນົມແກະ, ນົມຖົ່ວເຫຼືອງ ສຳລັບເດັກອ່ອນ ແລະ ເດັກນ້ອຍ";
- ຖ້າຜະລິດຕະພັນທີ່ບໍ່ມີນົມ ຫຼື ອະນຸພັນຂອງນົມ ຕ້ອງລະບຸວ່າ "ບໍ່ມີນົມ ຫຼື ບໍ່ມີຜະລິດຕະພັນນົມ" ຫຼື ສຳນວນຄຳເວົ້າທີ່ເທົ່າທຽມກັນ;

- ຖ້າຜະລິດຕະພັນບໍ່ມີແລັກໂຕສ ຕ້ອງລະບຸວ່າ "ບໍ່ມີແລັກໂຕສ".

2. **ສ່ວນປະກອບຂອງຜະລິດຕະພັນອາຫານ**

- **ລໍາດັບລາຍຊື່:**

ຕ້ອງແຈ້ງສ່ວນປະກອບທັງໝົດໃນສະຫຼາກຕາມລໍາດັບ ອັດຕາສ່ວນຂອງນໍ້າໜັກ (ມວນສານ/ມວນສານ) ຈາກໃຫຍ່ຫານ້ອຍ, ຍົກເວັ້ນໃນກໍລະນີຂອງວິຕາມິນ ແລະ ແຮ່ທາດ ທີ່ເພີ່ມເຕີມ, ສ່ວນປະກອບເຫຼົ່ານີ້ອາດຈະຖືກຈັດເປັນກຸ່ມແຍກຕ່າງຫາກ ຊຶ່ງບໍ່ຈໍາເປັນຕ້ອງໄດ້ ຈັດລໍາດັບຈາກໃຫຍ່ຫານ້ອຍ.

- **ການລະບຸ:**

ຕ້ອງແຈ້ງຊື່ສະເພາະ ຖ້າຜະລິດຕະພັນອາຫານຫາກປະກອບດ້ວຍ ແຫຼ່ງກໍາເນີດຈາກສັດ ຫຼື ພືດ. ຖ້າມີສ່ວນປະກອບດ້ວຍທາດເພີ່ມອາຫານ (Food Additives) ກໍ່ຄວນລະບຸກຸ່ມຊື່ທີ່ເໝາະສົມ ເປັນຕົ້ນ ສານຄວບຄຸມຄວາມເປັນກົດ (Acidity regulator), ສານປ້ອງກັນການຈັບເປັນກ້ອນ (Anticaking), ສານປ້ອງກັນການເກີດອອກຊີເດຊັ່ນ (Antioxidant), ສານເຮັດໃຫ້ເປັນເນື້ອດຽວ (Emulsifier), ສານເຮັດໃຫ້ຄົງຕົວ (Stabilizer), ສານຊ່ວຍລະລາຍ (Carrier), ແລະ ໃສ່ເລກລະບົບລະຫັດສາກົນ (International Numbering System (INS).

- **ການແຈ້ງສານພູມແພ້:**

ຕ້ອງໄດ້ແຈ້ງສ່ວນປະກອບອາຫານ ທີ່ເຫັນວ່າ ຫຼື ມັກກໍ່ໃຫ້ເກີດ ອາການແພ້, ບາງຕົວຢ່າງດັ່ງລຸ່ມນີ້:

- ພືດພັນທັນຍາຫານ ທີ່ບັນຈຸ ທາດ ກລູຍເຕັນ (gluten) ເຊັ່ນ ເຂົ້າວີດ (wheat), ເຂົ້າໄຣ (rye), ເຂົ້າບາເລ (barley), ເຂົ້າໂອດ (oat) ຫຼື ສາຍພັນ ແລະ ຜະລິດຕະພັນຂອງມັນ;
- ກຸ້ງ ແລະ ຜະລິດຕະພັນກຸ້ງ;
- ໄຂ່ ແລະ ຜະລິດຕະພັນໄຂ່;
- ປາ ແລະ ຜະລິດຕະພັນປາ;
- ຖົ່ວດິນ, ຖົ່ວຂຽວ ແລະ ຜະລິດຕະພັນ ຂອງມັນ;
- ນົມ ແລະ ຜະລິດຕະພັນນົມ (ລວມທັງ Lactose);
- ຖົ່ວເປືອກແຂງ (Tree nut) ແລະ ຜະລິດຕະພັນ ຂອງ;
- ຊັນໄຟຣ (Sulphite) ໃນຄວາມເຂັ້ມຂຸ້ນ 10mg/kg.

3. **ຂໍ້ມູນທາງດ້ານໂພຊະນາການ**

ການແຈ້ງຂໍ້ມູນທາງດ້ານໂພຊະນາການ ຂອງຜະລິດຕະພັນອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງມີຂໍ້ມູນທີ່ຕ້ອງສະແດງໃນສະຫຼາກຢູ່ໃນລໍາດັບດັ່ງຕໍ່ໄປນີ້:

**ກ. ປະລິມານພະລັງງານ:**

- ປະລິມານພະລັງງານຕ້ອງສະແດງອອກເປັນຫົວໜ່ວຍກິໂລແຄລໍຣີ (kcal) ແລະ/ຫຼື ກິໂລຈູລ (kJ) ຕໍ່ 100 g ຫຼື ຕໍ່ 100 ml ຂອງຜະລິດຕະພັນອາຫານ.
- ປະລິມານຂອງທາດ ໂປຼຕີນ, ແປ້ງ, ແລະ ໄຂມັນຈະຕ້ອງລະບຸ ເປັນຫົວໜ່ວຍກຼາມ (g) ຕໍ່ 100 g ຫຼື ຕໍ່ 100 ml ຂອງຜະລິດຕະພັນອາຫານ.

**ຂ. ຂອບເຂດພະລັງງານ:**

- ປະລິມານພະລັງງານຕ້ອງມີຢ່າງໜ້ອຍ 60 kcal (250 kJ) ແລະ ບໍ່ເກີນ 70 kcal (295 kJ) ຕໍ່ 100 ml ຂອງຜະລິດຕະພັນອາຫານ.

ຄ. ຂອບເຂດ Macronutrients:

- ປະລິມານຂອງທາດ ໂປຼຕີນ, ແປ້ງ, ແລະ ໄຂມັນ ແມ່ນອະນຸຍາດໃຫ້ ຢູ່ໃນຂອບເຂດຕໍ່າສຸດ ແລະ ສູງສຸດ ທີ່ຖືກກໍານົດໄວ້ ຫຼື ບໍ່ໃຫ້ເກີນລະດັບແນະນໍາ Guidance Upper Levels (GUL).

ງ. ວິຕາມິນ ແລະ ແຮ່ທາດ:

- ປະລິມານທັງໝົດຂອງວິຕາມິນ ແລະ ແຮ່ທາດ ຕ້ອງສະແດງອອກເປັນຫົວໜ່ວຍເມຕຼິກ (Metric units) ຕໍ່ 100 g ຫຼື ຕໍ່ 100 ml ຫຼື ຕໍ່ກ່ອງ ຖ້າຫາກກ່ອງບັນຈຸສໍາລັບ ການບໍລິໂພກພຽງຄັ້ງດຽວ ຂອງຜະລິດຕະພັນອາຫານ.
- ມີພຽງ ວິຕາມິນ ແລະ ແຮ່ທາດ ທີ່ມີລາຍຊື່ໃນ ຄ່າອ້າງອີງຂອງສານອາຫານ (NRV) ເທົ່ານັ້ນ ທີ່ສາມາດແຈ້ງໃນສະຫຼາກຜະລິດຕະພັນອາຫານ. ວິຕາມິນ ແລະ ແຮ່ທາດ ຕ້ອງບັນຈຸຢ່າງໜ້ອຍ 5% ຂອງ NRV ຕໍ່ຫົວໜ່ວຍບໍລິໂພກ.

4. **ການໃສ່ວັນທີເດືອນປີ ແລະ ຂໍ້ແນະນໍາໃນການເກັບຮັກສາ**

- ການໃສ່ ວັນທີເດືອນປີທີ່ຜະລິດ ແລະ ໝົດອາຍຸ ຫຼື ວັນທີເດືອນປີໝົດອາຍຸ ຫຼື ວັນທີເດືອນປີຜະລິດ ແລະ ວັນທີທີ່ຄວນບໍລິໂພກກ່ອນ ຂອງຜະລິດຕະພັນອາຫານ ຕ້ອງລະບຸເປັນຕົວເລກ ຍົກເວັ້ນ ເດືອນ ອາດແຈ້ງເປັນຕົວໜັງສື (ສາກົນ), ໂດຍພິມ ຫຼື ຍິງ ຫຼື ປໍ້າ ແບບຖາວອນໃສ່ສະຫຼາກ ຫຼື ພາຊະນະບັນຈຸ ຢູ່ບ່ອນທີ່ສາມາດເບິ່ງເຫັນໄດ້ງ່າຍ ແລະ ຈະແຈ້ງເພື່ອບໍ່ໃຫ້ຜູ້ບໍລິໂພກສັບສົນ;
- ການໃສ່ຂໍ້ແນະນໍາໃນການເກັບຮັກສາຜະລິດຕະພັນອາຫານ ຕ້ອງອີງໃສ່ຄຸນລັກສະນະສະເພາະ ຂອງແຕ່ລະຊະນິດອາຫານ ຫຼື ເງື່ອນໄຂການນໍາໃຊ້. ຂໍ້ແນະນໍາການເກັບຮັກສາຄວນຢູ່ໃກ້ກັບເຄື່ອງໝາຍວັນທີຜະລິດ ແລະ ໝົດອາຍຸ.

5. **ການລະບຸສີຂອງພາຊະນະບັນຈຸຜະລິດຕະພັນອາຫານ**

ຜະລິດຕະພັນອາຫານ ນົມຜົງແຕ່ລະສູດ 1, 2, 3 ຕ້ອງລະບຸສີ ທີ່ແຕກຕ່າງກັນສໍາລັບການນໍາໃຊ້ແຕ່ລະອາຍຸ ຂອງເດັກອ່ອນ ແລະ ເດັກນ້ອຍ.

6. **ການໃສ່ເລກທະບຽນ ອຢ**

ຜະລິດຕະພັນອາຫານ ຕ້ອງໃສ່ເລກທະບຽນ ອຢ ທີ່ໄດ້ຮັບອະນຸຍາດຂຶ້ນທະບຽນຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

7. **ຂໍ້ແນະນໍາສໍາລັບການນໍາໃຊ້**

ຜະລິດຕະພັນອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງແຈ້ງຂໍ້ແນະນໍາສໍາລັບການນໍາໃຊ້ສະເພາະ, ຕ້ອງໄດ້ລະບຸອາຍຸຂອງເດັກໃສ່ ເພື່ອບໍ່ໃຫ້ມີການເຂົ້າໃຈຜິດ ແລະ ນໍາໃຊ້ໃຫ້ຖືກຕ້ອງ ໂດຍສະເພາະນົມຜົງສໍາລັບເດັກອ່ອນ, ລວມທັງຂໍ້ບັງຄັບ ຖ້າມີ.

8. **ຂະໜາດຕົວອັກສອນຂອງຄໍາເຕືອນ ແລະ ຂໍ້ຫ້າມ**

ຂໍ້ຄວາມດັ່ງກ່າວ ຕ້ອງມີຂະໜາດ ຕົວອັກສອນ ໜຶ່ງສ່ວນສາມ (1/3) ຂອງຂະໜາດຂອງຕົວອັກສອນໃນຜະລິດຕະພັນ ແລະ ຂະໜາດຄວາມສູງ ຂອງຕົວອັກສອນ ທຸກຄັ້ງຕ້ອງບໍ່ໃຫ້ຫຼຸດ 2 mm.

## ມາດຕາ 7 ການກໍານົດເພີ່ມເຕີມຂອງເນື້ອໃນສະຫຼາກ

ນອກຈາກເນື້ອໃນສະຫຼາກທີ່ໄດ້ກໍານົດຢູ່ໃນມາດຕາ 5 ແລະ 6 ຂອງຂໍ້ຕົກລົງສະບັບນີ້ແລ້ວ, ຕ້ອງມີເນື້ອໃນເພີ່ມເຕີມ ດັ່ງນີ້:

1. **ຜະລິດຕະພັນອາຫານ ແລະ ອາຫານເສີມສໍາລັບເດັກອ່ອນ ແລະ ເດັກນ້ອຍ**

- ການລ້ຽງລູກດ້ວຍນ້ຳນົມແມ່ ແມ່ນດີທີ່ສຸດ ບໍ່ມີສິ່ງໃດທົດແທນໄດ້ ສຳລັບເດັກອ່ອນ ແລະ ເດັກນ້ອຍ ເພາະມີ ພູມຄຸ້ມກັນ, ສານອາຫານ ແລະ ຄຸນຄ່າທາງດ້ານໂພຊະນາການຄົບຖ້ວນ;
- ການນຳໃຊ້ອາຫານເສີມກ່ອນອາຍຸ 6 ເດືອນ ມີຜົນກະທົບໃນທາງລົບຕໍ່ການລ້ຽງລູກດ້ວຍນ້ຳນົມແມ່;
- ປະກອບມີຄຳວ່າ " **ເຕືອນ** " ເຊັ່ນ:

  ກ. ຫ້າມໃຊ້ກັບເດັກອ່ອນ ອາຍຸຕ່ຳກວ່າຫົກເດືອນ;

  ຂ. ບໍ່ຄວນຕື່ມນ້ຳຕານ, ນ້ຳເຜີ້ງ ຫຼື ສິ່ງທີ່ໃຫ້ລົດຫວານ ເພາະອາດຈະເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍ ມີພາວະນ້ຳໜັກເກີນ ແລະ ແຂ້ວເດັກບໍ່ແຂງແຮງ;

  ຄ. ບໍ່ຄວນປະສົມຜະລິດຕະພັນອາຫານເສີມໃສ່ນ້ຳທີ່ບໍ່ທັນຕົ້ມສຸກ ຫຼື ໃຊ້ເຕົ້ານົມ ທີ່ບໍ່ໄດ້ຜ່ານການຕົ້ມ ຫຼື ປະສົມ ອາຫານເສີມ ໃນອັດຕາສ່ວນທີ່ບໍ່ຖືກຕ້ອງ ຊຶ່ງຈະມີຜົນເຮັດໃຫ້ເດັກອ່ອນ ແລະ ເດັກນ້ອຍເຈັບປ່ວຍໄດ້;

  ງ. ຫ້າມເກັບຮັກສາອາຫານເສີມທີ່ປະສົມ ຫຼື ບໍ່ໄດ້ກິນ ຫຼື ກິນບໍ່ໝົດ, ເພາະມັນອາດຈະເປັນອັນຕະລາຍຕໍ່ສຸຂະພາບຂອງເດັກອ່ອນ ແລະ ເດັກນ້ອຍ.

**2. ນົມຜົງສູດສຳລັບເດັກອ່ອນ, ນົມຜົງສູດສຳລັບເດັກນ້ອຍ ແລະ ນົມຜົງສູດຕາມການຈະເລີນເຕີບໂຕ**

ນອກຈາກມີເນື້ອໃນສະຫຼາກຜະລິດຕະພັນອາຫານລວມຂ້າງເທິງນີ້ ຍັງຕ້ອງມີເນື້ອໃນດັ່ງນີ້:

- ມີຂໍ້ຄວາມທີ່ສຳຄັນ ແລະ ຄຳອະທິບາຍ ທີ່ສະແດງໃຫ້ເຫັນຈະແຈ້ງ, ເຂົ້າໃຈງ່າຍ, ຕົວອັກສອນ ຕ້ອງເປັນສີເຂັ້ມ ແລະ ລະບຸຄຳວ່າ "**ນ້ຳນົມແມ່ ແມ່ນອາຫານທີ່ມີຄຸນຄ່າທາງໂພຊະນາການທີ່ດີທີ່ສຸດ**";
- ມີຄຳສັບ "**ຄຳເຕືອນ**" ເປັນຕົວອັກສອນສີເຂັ້ມ ແລະ ລະບຸຂໍ້ຄວາມທີ່ວ່າ "**ກ່ອນທີ່ຈະຕັດສິນໃຈນຳໃຊ້ນົມຜົງສຳລັບເດັກອ່ອນ ຕ້ອງປຶກສາແພດໝໍ, ພະຍາບານ ຫຼື ນັກໂພຊະນາການ**" "**ການລ້ຽງລູກດ້ວຍເຕົ້ານົມ ຈະພາໃຫ້ລູກສັບສົນໃນການດູດນົມແມ່**";
- ນົມຜົງສູດຕໍ່ເນື່ອງ ແລະ ນົມຜົງສູດຕາມການຈະເລີນເຕີບໂຕ ຕ້ອງມີ "**ຄຳເຕືອນ**" ລະບຸຂໍ້ຄວາມວ່າ "**ຫ້າມໃຊ້ ສຳລັບເດັກ ທີ່ມີອາຍຸຕ່ຳກວ່າ 6 ເດືອນ ຫຼື ນຳໃຊ້ເປັນ ແຫຼ່ງໂພຊະນາການພຽງຢ່າງດຽວຂອງເດັກ**";
- "**ຄຳເຕືອນ**: ນົມຜົງສຳລັບເດັກອ່ອນ ແລະ ເດັກນ້ອຍ ແມ່ນບໍ່ປາສະຈາກເຊື້ອ ແລະ ອາດມີເຊື້ອແບັກທີເລຍ ທີ່ເປັນອັນຕະລາຍ. ຄວນກຽມນົມດ້ວຍນ້ຳຕົ້ມບໍ່ຕ່ຳກວ່າ 70°C ແລະ ນົມປະສົມແລ້ວ ທີ່ບໍ່ໄດ້ກິນ ຫຼື ເຫຼືອກິນ ໃຫ້ຖິ້ມທັນທີ";
- ນົມຜົງສູດຕາມການຈະເລີນເຕີບໂຕ ຕ້ອງມີ "**ຄຳເຕືອນ**" ລະບຸຂໍ້ຄວາມວ່າ "**ຫ້າມໃຊ້ ສຳລັບເດັກອ່ອນທີ່ມີອາຍຸຕ່ຳກວ່າ 12 ເດືອນ**";
- ເງື່ອນໄຂທີ່ຈຳເປັນ ໃນການເກັບຮັກສາ, ກ່ອນ ແລະ ຫຼັງ ເປີດກ່ອງ ຫຼື ຖົງທີ່ບັນຈຸຜະລິດຕະພັນ ລວມທັງອຸນຫະພູມ ແລະ ສະພາບແວດລ້ອມ;
- ມີຮູບແຕ້ມ ຫຼື ຮູບພາບ ສະເພາະແຕ່ວິທີການປຸງແຕ່ງ;
- ຕາຕະລາງແນະນຳ ການໃຫ້ນົມທີ່ສະແດງເຖິງອັດຕາສ່ວນຂອງນົມ ທີ່ຈະໃຫ້ລູກກິນຢ່າງເໝາະສົມ ແລະ ສອດຄ່ອງ ກັບຫຼັກການແນະນຳກ່ຽວກັບການໃຫ້ອາຫານ ຂອງອົງການອະນາໄມໂລກ ໃນແຕ່ລະໄລຍະທີ່ແຕກຕ່າງຕາມອາຍຸຂອງເດັກ.

**3. ຜະລິດຕະພັນນົມທີ່ບໍ່ມີໄຂມັນ, ນົມໄຂມັນຕໍ່າ, ນົມຂຸ້ນຫວານ ແລະ ນົມສູດ ໃນຮູບແບບຜົງ ຫຼື ນົມພ້ອມດື່ມ**

- ສະຫຼາກນົມບໍ່ມີໄຂມັນ, ນົມໄຂມັນຕໍ່າ ຫຼື ນົມສູດ ໃນຮູບແບບຜົງ ຫຼື ທາດແຫຼວ ຕ້ອງລະບຸວ່າ "**ຜະລິດຕະພັນນີ້ຫ້າມນໍາໃຊ້ເປັນແຫຼ່ງໂພຊະນາການສໍາລັບເດັກອ່ອນ ແຕ່ມື້ເກີດຫາ 12 ເດືອນ**". ສະຫຼາກຕ້ອງປະກອບດ້ວຍ ຄໍາແນະນໍາ ຫຼື ຄໍາເຕືອນສະເພາະ ແລະ ຊັດເຈນ, ຈະແຈ້ງ, ເພື່ອບໍ່ໃຫ້ເຂົ້າໃຈຜິດ ແລະ ນໍາໃຊ້ນົມດັ່ງກ່າວ ສໍາລັບໄປລ້ຽງເດັກອ່ອນ ໂດຍບໍ່ຖືກຕ້ອງ;
- ຜະລິດຕະພັນທີ່ບໍ່ເໝາະສົມ ເຊັ່ນ: ນົມຂຸ້ນຫວານ ຫຼື ຄີມຂຸ້ນຫວານ ໃນຮູບແບບຜົງ ຫຼື ທາດແຫຼວ, ລວມທັງນົມຄີມ ຫຼື ບໍ່ແມ່ນນົມຄີມ ຈະຕ້ອງມີຄໍາເຕືອນທີ່ລະບຸໄວ້ວ່າ: **"ຜະລິດຕະພັນນີ້ແມ່ນຫ້າມໃຊ້ລ້ຽງເດັກອ່ອນ ຕັ້ງແຕ່ມື້ເກີດຫາ 12 ເດືອນ".**

## ໝວດທີ 3
## ສະຫຼາກ ແລະ ເນື້ອໃນສະຫຼາກ
## ອຸປະກອນກ່ຽວກັບອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ

### ມາດຕາ 8 ຫຼັກການທົ່ວໄປ

ອຸປະກອນກ່ຽວກັບອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ທີ່ຜະລິດ, ນໍາເຂົ້າ ແລະ ຈໍາໜ່າຍ ໃນ ສປປ ລາວ ຈະຕ້ອງໃສ່ສະຫຼາກ ແລະ ເນື້ອໃນ ເປັນພາສາລາວ ໃຫ້ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້; ຕ້ອງຂໍອະນຸຍາດນໍາເຂົ້າ ແລະ ຜ່ານເນື້ອໃນສະຫຼາກ ນໍາກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ, ຊຶ່ງຕ້ອງລະບຸ ຂໍ້ມູນທີ່ສໍາຄັນເປັນຕົ້ນ ຊື່ຂອງອຸປະກອນ; ສ່ວນປະກອບ; ທີ່ຢູ່ຂອງຜູ້ຜະລິດ ແລະ ຜູ້ນໍາເຂົ້າ; ວັນເດືອນປີຜະລິດ, ວັນເດືອນປີໝົດອາຍຸ; ຂໍ້ແນະນໍາໃນການນໍາໃຊ້, ການເກັບຮັກສາ ແລະ ຄໍາເຕືອນ.

ອຸປະກອນກ່ຽວກັບອາຫານ ສໍາລັບເດັກອ່ອນ ແລະ ເດັກນ້ອຍ ຕ້ອງປາສະຈາກ ສານທີ່ກໍ່ໃຫ້ເກີດມະເຮັງ ເປັນຕົ້ນ ສານ Bisphenol-A (BPA), Bisphenol-S (BSA), Phthalates.

### ມາດຕາ 9 ສະຫຼາກ ແລະ ເນື້ອໃນສະຫຼາກ ສໍາລັບ ເຕົ້ານົມ, ຫົວຈຸກນົມ ແລະ ໝາກແວ້

1. ສະຫຼາກ ສໍາລັບ ເຕົ້ານົມ, ຫົວຈຸກນົມ ແລະ ໝາກແວ້ ຕ້ອງເປັນພາສາລາວ ຫຼື ພາສາລາວ ແລະ ພາສາຕ່າງປະເທດ ຄວບຄູ່ກັນ ເຊິ່ງປະກອບ ມີຂໍ້ຄວາມ, ຄໍາສັບ, ປະໂຫຍກ, ຄໍາແນະນໍາ ທີ່ພິມ ແລະ ເນື້ອໃນ ດັ່ງຕໍ່ໄປນີ້:

- ກໍານົດອາຍຸສໍາລັບການນໍາໃຊ້;
- ຄໍາແນະນໍາສໍາລັບການທໍາຄວາມສະອາດ ແລະ ການຂ້າເຊື້ອ, ນໍາສະເໜີໃນຮູບແບບລາຍລັກອັກສອນ ແລະ ເປັນຕາຕະລາງຂອງຂັ້ນຕອນແນະນໍາ;
- ຄໍາເຕືອນທີ່ສໍາຄັນກ່ຽວກັບອຸນຫະພູມ, ບໍລິມາດ ແລະ ການນໍາໃຊ້ທີ່ເໝາະສົມ, ຊຶ່ງພໍ່ແມ່ ຫຼື ຜູ້ດູແລເດັກ ຈະຕ້ອງປະຕິບັດຕາມຢ່າງເຂັ້ມງວດ;
- "ຄໍາເຕືອນ: ການທໍາຄວາມສະອາດ ແລະ ການຂ້າເຊື້ອຂວດ ແລະ ຈຸກນົມທີ່ບໍ່ເໝາະສົມ ສາມາດເຮັດໃຫ້ເກີດການຕິດເຊື້ອທີ່ຮ້າຍແຮງໄດ້. ທໍາຄວາມສະອາດ ໃຫ້ ລະອຽດ ແລະ ຂ້າເຊື້ອ ກ່ອນນໍາໃຊ້ ທຸກຄັ້ງ "ຂະໜາດຕົວອັກສອນຈະຕ້ອງບໍ່ໜ້ອຍກວ່າໜຶ່ງສ່ວນສາມ (1/3) ຂອງຂະໜາດຂອງຕົວອັກສອນໃນຊື່ຜະລິດຕະພັນ ແລະ ຄວາມສູງບໍ່ໃຫ້ຕໍ່າກວ່າ 2 mm";

- ຄຳເຕືອນ: "ການໃຊ້ ເຕົ້ານົມ, ຫົວຈຸກນົມ, ໝາກແວ້ ເຮັດໃຫ້ເດັກບໍ່ຢາກດູດນົມແມ່"
- ຊື່ ແລະ ທີ່ຢູ່ຂອງຜູ້ຜະລິດ ຫຼື ຜູ້ຈັດຈຳໜ່າຍ

2. ສະຫຼາກສຳລັບເຕົ້ານົມ ແລະ ຫົວຈຸກນົມ ຕ້ອງລະບຸເພີ່ມເຕີມ ຂໍ້ຄວາມ, ຄຳເວົ້າ, ຄຳສັບ, ປະໂຫຍກຄຳເວົ້າ ຫຼື ຄຳແນະນຳ ແລະ ມີເນື້ອໃນ ທີ່ເບິ່ງເຫັນ ແລະ ເຂົ້າໃຈໄດ້ຢ່າງງ່າຍດາຍ ແລະ ຈະແຈ້ງ ເຊັ່ນ:

- "ການລ້ຽງລູກດ້ວຍນົມແມ່ແມ່ນດີທີ່ສຸດ";
- "ນ້ຳນົມແມ່ເປັນອາຫານທີ່ດີທີ່ສຸດ ສຳລັບການຈະເລີນເຕີບໂຕ ຢ່າງມີສຸຂະພາບ ແຂງແຮງ ແລະ ພັດທະນາການຂອງເດັກອ່ອນ ແລະ ເດັກນ້ອຍ".
- ສະຫຼາກຕ້ອງອະທິບາຍ ການປ້ອນນົມໃສ່ຈອກ ແມ່ນມີສຸຂະອະນາໄມດີກວ່າເຕົ້ານົມ, ແລະ ຫົວຈຸກນົມ

## ໝວດທີ 4
## ບັນດາຂໍ້ຫ້າມ

### ມາດຕາ 10 ຂໍ້ຫ້າມສຳລັບຜູ້ປະກອບການ

ຫ້າມມີການສະແດງຂໍ້ຄວາມ ຫຼື ເນື້ອໃນ ແລະ ການກ່າວອ້າງ ດັ່ງລຸ່ມນີ້:

1. **ຫ້າມໃນການໃສ່ສະຫຼາກ**
   - ສະຫຼາກ ທີ່ມີພາສາຕ່າງປະເທດພຽງຢ່າງດຽວ, ບໍ່ກຳນົດ ວັນທີເດືອນປີທີ່ຜະລິດ ແລະ ໝົດອາຍຸ ຫຼື ວັນທີເດືອນປີໝົດອາຍຸ ຫຼື ວັນທີເດືອນປີຜະລິດ ແລະ ວັນທີທີ່ຄວນບໍລິໂພກກ່ອນ ຂອງຜະລິດຕະພັນອາຫານ;
   - ສະຫຼາກກ່ອງບັນຈຸ ທີ່ມີຮູບພາບ, ຮູບແຕ້ມ ຂອງເດັກອ່ອນ ແລະ ເດັກນ້ອຍ ຮ່ວມກັບພໍ່ແມ່ ແລະ ຄົນໃນຄອບຄົວ;
   - ຮູບພາບສັດ ທີ່ຕິດຢູ່ໃນ ເຄື່ອງຫຸ້ມຫໍ່ຜະລິດຕະພັນ.
2. **ຫ້າມການກ່າວອ້າງ**
   - ການນຳໃຊ້ການກ່າວອ້າງ ທາງດ້ານສຸຂະພາບ ແລະ ໂພຊະນາການ ໃນສະຫຼາກ ຂອງຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ;
   - ການກ່າວອ້າງ ກ່ຽວກັບ ການຮັບຮອງໂດຍອີງການຈັດຕັ້ງ ຫຼື ສູນວິໄຈຈາກຊ່ຽວຊານ.
3. **ຫ້າມດ້ານການຕະຫຼາດ ແລະ ການໂຄສະນາ**
   - ການລະບຸ ຫຼື ສະແດງ ຄຳເວົ້າ ໃນລັກສະນະການໃຫ້ຂອງແຖມ ຂອງຂວັນ, ຫຼຸດລາຄາ, ໃຫ້ລາງວັນ ຫຼື ສິ່ງຈູງໃຈສິ່ງເສີມອື່ນໆ ລວມທັງການຕະຫຼາດດິຈິຕອນ;
   - ເນື້ອຫາໂຄສະນາ ຫຼື ສາຍດ່ວນທີ່ເຊື່ອມຕໍ່ໂດຍກົງ ກັບຜູ້ຊ່ຽວຊານຂອງບໍລິສັດ ເພື່ອໃຫ້ຄຳແນະນຳດ້ານໂພຊະນາການຂອງແມ່ ແລະ ເດັກ.

### ມາດຕາ 11 ຫ້າມພະນັກງານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳດັ່ງນີ້:

1. ການປະຕິບັດໜ້າທີ່ ຂາດຄວາມຍຸຕິທຳ, ລຳອຽງ ແລະ ບໍ່ຖືກຕ້ອງ ໃນການພິຈາລະນາຂຶ້ນ ຫຼື ຕໍ່ທະບຽນ;

2. ກົດໜ່ວງຖ່ວງດຶງ, ທວງເອົາສິນບົນ, ຮຽກຮ້ອງຄ່າຕອບແທນ, ສວຍໃຊ້ຖານະຕໍາແໜ່ງ, ສິດ ແລະ ໜ້າທີ່ທາງລັດຖະການ ເພື່ອຜົນປະໂຫຍດສ່ວນຕົວ;

3. ປົກປິດ, ສະໜັບສະໜູນ, ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດກັບຜູ້ປະກອບການ ສໍາລັບຜະລິດຕະພັນອາຫານ ທີ່ບໍ່ປັບປຸງລະບຽບການໃສ່ສະຫຼາກ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 12 ນະໂຍບາຍຕໍ່ບຸກຄົນທີ່ມີຜົນງານດີເດັ່ນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມຄວາມເໝາະສົມ ຕາມການກໍານົດ ຂອງກະຊວງສາທາລະນະສຸກ.

### ມາດຕາ 13 ມາດຕະການຕໍ່ຜູ້ລະເມີດ ແລະ ປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ກໍລະນີ ດັ່ງລຸ່ມນີ້:

**1. ການກະທໍາຜິດຄັ້ງທີໜຶ່ງ:**
- ຜູ້ລະເມີດຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ;
- ເຮັດບົດບັນທຶກ, ແລະ ເກັບຕົວຢ່າງ ໄວ້ເປັນຫຼັກຖານ;
- ເຮັດໜັງສືແຈ້ງເຕືອນບໍລິສັດ/ຜູ້ຈັດຈໍາໜ່າຍ ພ້ອມຫຼັກຖານ ແລະ ຮູບພາບ.

**2. ການກະທໍາຜິດຄັ້ງທີສອງ:**
- ຜູ້ລະເມີດຈະຖືກ ອາຍັດ ຫຼື ຍຶດ ສິນຄ້າດັ່ງກ່າວ;
- ໃບຢັ້ງຢືນການຂຶ້ນທະບຽນອາຫານ ຈະຖືກໂຈະ ຫຼື ຖອນ;
- ເຮັດບັນທຶກ ແລະ ປັບໃໝ 50% ຂອງມູນຄ່າຂອງສິນຄ້າທີ່ລະເມີດ;

**3. ການກະທໍາຜິດຄັ້ງທີສາມ:**
- ໃບຢັ້ງຢືນການຂຶ້ນທະບຽນອາຫານ ຈະຖືກຍົກເລີກ;
- ເຮັດບົດບັນທຶກ, ປັບໃໝ 100% ຂອງມູນຄ່າຂອງສິນຄ້າທີ່ລະເມີດ ແລະ ຍຶດສິນຄ້າດັ່ງກ່າວ;
- ສະເໜີໃຫ້ຂະແໜງອຸດສາຫະກໍາ ແລະ ການຄ້າ ປະຕິບັດຕາມລະບຽບການ ເພື່ອໂຈະໃບອະນຸຍາດດໍາເນີນທຸລະກິດ.

ໃນກໍລະນີມີຜົນກະທົບຮ້າຍແຮງເປັນອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດຂອງຜູ້ບໍລິໂພກ ບໍ່ວ່າຈະເປັນຄັ້ງທີ 1, 2 ແລະ 3 ກໍ່ຕາມ ຈະຖືກປະຕິບັດການໂຈະ ຫຼື ຖອນ ທະບຽນ ຜະລິດຕະພັນ ພ້ອມທັງຮຽກເກັບຄືນຜະລິດພັນ ແລະ ແຈ້ງໂຈະການດໍາເນີນກິດຈະການຂອງຜູ້ກະທໍາຜິດ ແລະ ສືບຕໍ່ດໍາເນີນຄະດີທາງ ແພ່ງ ຫຼື ອາຍາ ຕາມແຕ່ລະກໍລະນີ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ ເປັນເຈົ້າການໃນການຜັນຂະຫຍາຍ ໂດຍປະສານສົມທົບກັບພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ.ດຣ. ບຸນແຝງ ພູມມະໄລສິດ